BANK Kid

"ກ້າວທຳອິດ ຂອງການສຶກສາ
ສູ່ໂລກ ການເງິນຍຸກໃໝ່"

ທຄຕລ ຈັດກິດຈະກຳ ທັດສະນະສຶກສາ ເພື່ອຕ້ອນຮັບວັນເດັກນ້ອຍສາກົນ













ວັນທີ 26 ພຶດສະພາ 2026, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ໄດ້ຈັດກິດຈະກຳທັດສະນະທະນາຄານ ໂດຍໄດ້ຕ້ອນຮັບນ້ອງໆນັກຮຽນຈາກ ໂຮງຮຽນ ວິຣະຖາວອນ ເຂົ້າຮ່ວມສຳຜັດປະສົບການຊີວິດຈິງຢູ່ພາຍໃນທະນາຄານ. ຈຸດປະສົງຂອງການຈັດກິດຈະກຳ ເພື່ອໃຫ້ນ້ອງໆ ໄດ້ຮັບປະສົບການທີ່ຫາໄດ້ຍາກ ຈາກການຈຳລອງເຮັດວຽກຕົວຈິງດ້ານທະນາຄານ, ໄດ້ພົບປະ ແລະ ທົດລອງນັ່ງໃນຫ້ອງທ່ານຜູ້ອຳນວຍການ. ນອກນັ້ນ, ຍັງໄດ້ຮ່ວມກິດຈະກຳທີ່ ທຄຕລ ກຽມໄວ້ຢ່າງພິເສດ.

ການຈັດກິດຈະກຳໃນຄັ້ງນີ້ ສະທ້ອນໃຫ້ເຫັນວິໄສທັດຂອງ ທຄຕລ ທີ່ຕ້ອງການ **"ເຂົ້າເຖິງ ແລະ ສ້າງຄວາມໝັ້ນໃຈ"** ກັບລູກຄ້າທຸກເພດທຸກໄວ ໂດຍສະເພາະ ກຸ່ມເດັກນ້ອຍ ທີ່ຈະເປັນກຳລັງຂອງຊາດໃນອະນາຄົດ.



ທຄຕລ ພ້ອມຮ່ວມເດີນທາງສ້າງອະນາຄົດທາງການເງິນທີ່ດີ ຕັ້ງແຕ່ກ້າວທຳອິດໃຫ້ກັບທຸກທ່ານ, ຜ່ານຜະລິດຕະພັນ Kid Saving ບັນຊີເງິນຝາກທີ່ອອກແບບມາເພື່ອເດັກນ້ອຍ ໂດຍສະເພາະ ໃຫ້ຜົນຕອບແທນສູງ, ຜູ້ປົກຄອງ ແລະ ລູກ ສາມາດຮ່ວມກັນສ້າງວິໄນທາງການເງິນເພື່ອອະນາຄົດ ແລະ One Bank Kid ແອັບຈັດການການເງິນໃນໂທລະສັບ ທີ່ນ້ອງໆ ສາມາດຮຽນຮູ້ການໃຊ້ຈ່າຍໄດ້ດ້ວຍຕົນເອງ ໄດ້ທຸກທີ່ທຸກເວລາ ແລະ ທັງຮຽນຮູ້ການອອມເງິນ ແລະ ຜູ້ປົກຄອງ ສາມາດຄຸ້ມຄອງຕິດຕາມການໃຊ້ຈ່າຍຂອງລູກໄດ້ ຜ່ານໜ້າຈໍ ທີ່ອອກແບບໃຫ້ເປັນມິດຕໍ່ເດັກນ້ອຍໂດຍສະເພາະ.



BANK Kid

"ກ້າວທຳອິດ ຂອງການຮຽນຮູ້ ສູ່ໂລກ ການເງິນຍຸກໃໝ່"

BCEL Organizes Educational Visit to Celebrate International Children's Day

On May 26, 2026, Banque Pour Le Commerce Exterieur Lao Public (BCEL) organized a bank visit activity, welcoming students from Virathavone School to experience real-life banking operations inside the bank. The purpose of organizing this activity was to provide the children with a rare experience through simulating actual banking work, meeting with and trying out sitting in the Director's office. In addition, they also participated in special activities that BCEL had prepared.

This event reflects BCEL's vision to "reach out and build trust" with customers of all genders and ages, especially young children who will be the nation's future workforce.















BCEL is ready to join you in building a better financial future from the very first step through the Kid Saving product - a savings account specifically designed for children offering high returns, where parents and children can together develop financial discipline for the future - and OneBank Kid, a mobile financial app where children can learn to manage their own spending anytime, anywhere, while also learning to save money, and parents can monitor and track their children's spending through an interface specially designed to be child-friendly.

